**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

----------000----------

ກະຊວງ ໂຍທາທິການ ແລະ ຂົນສົ່ງ ເລກທີ ______/ ຍທຂ

ນະຄອນຫຼວງວຽງຈັນ, ວັນທີ ______/2009

# ຂໍ້ຕົກລົງ
# ຂອງລັດຖະມົນຕີວ່າການ
# ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການດັດສົມທຸລະກິດນ້ຳປະປາ

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ.
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 191/ນຍ ລົງວັນທີ 01 ກໍລະກົດ 2005 ວ່າດ້ວຍການດັດສົມທຸລະກິດ ນ້ຳປະປາ.
- ອີງຕາມ ການສະເໜີ ຂອງກົມຈັດຕັ້ງພະນັກງານ ກະຊວງ ໂຍທາທິການ ແລະ ຂົນສົ່ງ.

## ລັດຖະມົນຕີວ່າການ ຕົກລົງ:

**ມາດຕາ 1:** ແຕ່ງຕັ້ງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ຊຶ່ງປະກອບດ້ວຍ 10 ທ່ານດັ່ງລຸ່ມນີ້:

1. ທ່ານ ສີຫົງ ທອງແກ້ວ, ລັດຖະມົນຕີຊ່ວຍວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນປະທານ
2. ທ່ານ ຄຳທະວີ ໄທພະຈັນ, ຮັກສາການ ຫົວໜ້າ ກົມເຄຫາ ແລະ ຜັງເມືອງ, ກະຊວງ ຍທຂ ເປັນຮອງປະທານ
3. ທ່ານ ສິດທິສອນ ເທບພາສີ, ຫົວໜ້າ ກົມຄຸ້ມຄອງການເງິນ ຂອງລັດວິສາຫະກິດ, ກະຊວງ ການເງິນ ເປັນຮອງປະທານ
4. ທ່ານ ດຣ. ສົມພອນ ເດດອຸດົມ, ຮອງປະທານສະພາວິທະຍາສາດ-ເຕັກນິກ, ກະຊວງ ຍທຂ ເປັນຮອງປະທານ
5. ທ່ານ ສີສົມພອນ ແກ້ວຫາວົງ, ຫົວໜ້າ ຫ້ອງການປັບປຸງທຸລະກິດ, ສຳນັກງານນາຍົກລັດຖະມົນຕີ ເປັນຄະນະ
6. ທ່ານ ດຣ. ດວງຈັນ ແກ້ວອາສາ, ຫົວໜ້າກົມອະນາໄມ ແລະ ປ້ອງກັນພະຍາດ, ກະຊວງ ສາທາລະນະສຸກ ເປັນຄະນະ
7. ທ່ານ ນ. ກົມມະລີ ດາລາວົງ, ຮອງເລຂາທິການ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ເປັນຄະນະ
8. ທ່ານ ດາວເພັດ ບົວພາ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດນ້ຳປະປານະຄອນຫຼວງ, ໃນນາມຕ່າງໜ້າ ຜູ້ດຳເນີນທຸລະກິດນ້ຳປະປາ ເປັນຄະນະ
9. ທ່ານ ນ. ວິໄລຄຳ ໂພສາລາດ, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ໃນນາມຕ່າງໜ້າ ຜູ້ບໍລິໂພກ ເປັນຄະນະ
10. ທ່ານ ສົມວັນ ມົງພະຈັນ, ຫົວໜ້າຫ້ອງການດັດສົມນ້ຳປະປາ, ເປັນຄະນະຜູ້ປະຈຳການ, ທັງເປັນຫົວໜ້າ ກອງເລຂາ

**ມາດຕາ 2:** ຄະນະກໍາມະການດັດສົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດນະໂຍບາຍ ແລະ ຊີ້ນໍາລວມ ກ່ຽວກັບ ການດັດສົມທຸລະກິດນໍ້າປະປາ ໂດຍອີງໃສ່ ນະໂຍບາຍ ນໍ້າປະປາ ແຫ່ງຊາດ.
2. ພິຈາລະນາ ແລະ ໃຫ້ການຮັບຮອງເອົາ ແຜນການດັດສົມ ທີ່ຫ້ອງການດັດສົມນໍ້າປະປາສ້າງຂື້ນ ລວມທັງແຜນດໍາເນີນງານ, ການນໍາໃຊ້ພະນັກງານ, ການຝຶກອົບຮົມ, ງົບປະມານ ແລະ ແຜນການເງິນກ່ອນນໍາ ສະເໜີໃຫ້ ທ່ານລັດຖະມົນຕີວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງເອົາ.
3. ພິຈາລະນາຮັບຮອງເອົາ ບົດແນະນໍາຕ່າງໆ, ລະບຽບການ, ມາດຕະຖານສົມທຽບ ແລະ ຕົວຊີ້ວັດ ກ່ຽວກັບ ຜົນການປະຕິບັດວຽກງານ ທີ່ພົວພັນເຖິງບັນດາກິດຈະກໍາ ດັດສົມທຸລະກິດນໍ້າປະປາ ທີ່ຫ້ອງການດັດສົມນໍ້າປະປາສ້າງຂື້ນ.
4. ຊີ້ນໍາ, ຕິດຕາມກວດກາ ແລະ ຄວບຄຸມການເຄື່ອນໄຫວ ວຽກງານດັດສົມທຸລະກິດນໍ້າປະປາ.

**ມາດຕາ 3:** ຄະນະກໍາມະການດັດສົມ ຕ້ອງປະຊຸມກັນ ໃນທຸກໆ 3 ເດືອນ ແລະ ຕາມຄວາມຈໍາເປັນ ຂອງວຽກ ງານ; ການຕັດສິນ ຂອງຄະນະກໍາມະການດັດສົມ ແມ່ນອີງໃສ່ສຽງສ່ວນຫຼາຍ ແລະ ຖ້າໃນກໍລະນີທີ່ມີສຽງສະເໝີກັນ ປະທານ ເປັນຜູ້ຕັດສິນ.

**ມາດຕາ 4:** ກອງເລຂາ ຂອງຄະນະກໍາມະການດັດສົມທຸລະກິດນໍ້າປະປາ ແມ່ນຫ້ອງການດັດສົມນໍ້າປະປາ.

**ມາດຕາ 5:** ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງອໍານວຍຄວາມສະດວກ ໃຫ້ແກ່ຜູ້ຖືກແຕ່ງຕັ້ງ ເພື່ອປະຕິບັດວຽກງານ ໃຫ້ສໍາເລັດຜົນ ເປັນຢ່າງດີ.

**ມາດຕາ 6:** ໃຫ້ຂໍ້ຕົກລົງສະບັບນີ້ ມີຜົນນໍາໃຊ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີວ່າການ**